ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງພະລັງງານ ແລະ ບໍ່ແຮ່

ຫ້ອງການກະຊວງ

ເລກທີ 2228 /ພບ.ຫກ

ນະຄອນຫຼວງວຽງຈັນ ວັນທີ 08 MAY 2025

# ແຈ້ງເຊີນປະມູນ

ເຖິງ : ບັນດາຫ້າງຮ້ານ ທີ່ຈຳໜ່າຍເຄື່ອງໃຊ້ ປະເພດ (ຊັບສິນບັດຄົງທີ່ ແລະ ວັດຖຸອຸປະກອນຮັບໃຊ້ວິຊາສະເພາະ) ກະຊວງພະລັງງານ ແລະ ບໍ່ແຮ່.

ເລື່ອງ : ເຂົ້າແຈ້ງສະເໜີລາຄາ ເພື່ອຈັດຊື້ຊັບສິນບັດຄົງທີ່ ແລະ ວັດຖຸອຸປະກອນຮັບໃຊ້ວິຊາສະເພາະຂອງ ກະຊວງພະລັງງານ ແລະ ບໍ່ແຮ່.

- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້ - ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017;
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ສະບັບເລກທີ: 1180/ພບ, ລົງວັນທີ: 13 ມິຖຸນາ 2023 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການ ກະຊວງພະລັງງານ ແລະ ບໍ່ແຮ່;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບການປະມູນຈັດຊື້-ຈັດຈ້າງ ກໍ່ສ້າງ ແລະ ສ້ອມແປງ ສະບັບເລກທີ 1709/ພບ, ລົງວັນທີ 24 ສິງຫາ 2022.

ຫ້ອງການກະຊວງພະລັງງານ ແລະ ບໍ່ແຮ່ ຂໍແຈ້ງມາຍັງບັນດາຫ້າງຮ້ານ ທີ່ມີຄວາມສົນໃຈ ເຂົ້າສະເໜີລາຄາ ເພື່ອຈັດຊື້ຊອງປະມູນວຽກງານ ຈັດຊື້ຊັບສິນບັດຄົງທີ່ ແລະ ວັດຖຸອຸປະກອນຮັບໃຊ້ວິຊາສະເພາະຂອງ ກະຊວງພະລັງງານ ແລະ ບໍ່ແຮ່ ເຊິ່ງມີລາຍການດັ່ງນີ້:

ສາມາດຕິດຕໍ່ຊື້ຊອງປະມູນ ຕາມວັນ ແລະ ເວລາລັດຖະການ (ວັນຈັນ-ວັນສຸກ ເວລາ 8:30 ຫາ 16:00 ໂມງ)

- ເລີ່ມຂາຍຊອງປະມູນ ວັນທີ 08 ພຶດສະພາ 2025 ຫາວັນທີ 12 ມິຖຸນາ 2025, (ຜູ້ທີ່ມີຈຸດປະສົງເຂົ້າມາສະໜອງສິນຄ້າ ຕ້ອງໄດ້ເສຍຄ່າເອກະສານປະມູນເປັນເງິນສົດ ຈຳນວນ 3.000.000 ກີບ/ຊອງ).
- ຊອງປະມູນຕ້ອງສົ່ງກ່ອນເວລາ 14:00 ໂມງ ຂອງວັນທີ 12 ມິຖຸນາ 2025 ຢູ່ທີ່ ຫ້ອງການ ກະຊວງພະລັງງານ ແລະ ບໍ່ແຮ່ ໂດຍຊ້ອງໜ້າຄະນະກຳມະການຈັດການປະມູນ ແລະ ຕົວແທນຂອງບໍລິສັດ ທີ່ໄດ້ຍື່ນຊອງປະມູນ, ຖ້າສົ່ງກາຍກຳນົດເວລາ ຈະບໍ່ຮັບຜິດຈາລະນາ.
- ສຳລັບເງື່ອນໄຂ, ຄຳແນະນຳ ແລະ ແບບຟອມການປະມູນ ໄດ້ຄັດຕິດຊ້ອນທ້າຍໃນຊຸດຊອງການປະມູນແລ້ວ.
- ບໍລິສັດ ຕ້ອງປະກອບເອກະສານຕາມແບບຟອມແນະນຳ ແລະ ເງື່ອນໄຂທີ່ກຳນົດໄວ້ໃຫ້ຄົບຖ້ວນ.

<u>ໝາຍເຫດ:</u> ເວລາເຂົ້າມາພົວພັນສະເໜີລາຄາໃຫ້ແຕ່ງກາຍສຸພາບ (ເພດຍິງນຸ່ງສິ້ນລາວ, ເພດຊາຍນຸ່ງໂສ້ງຂາຍາວ ແລະ ເສື້ອສຸພາບ).

ຫົວໜ້າຫ້ອງການ

ຄຳໂສ້ ກຸໂພຄຳ

ຕິດຕໍ່ພົວພັນ: ນາງ ຈິນຕະນາວັນ ຊາພັກດີ 020 22214822
ທ້າວ ພຸວຽງ ຖາວີວອນ 020 54565962